ໃຫ້ທຶນໂດຍ
ສະຫະພາບ ເອີຣົບ

Lao Journalists Association

# ປະກາດການແຂ່ງຂັນຂຽນຂ່າວ ປະຈຳປີ 2025

### ພາຍໃຕ້ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ

### ສຳລັບນັກຂ່າວພາກລັດຖະບານ

## ເງື່ອນໄຂ ການປະກວດຂຽນຂ່າວ ມີດັ່ງນີ້:

### 1. ເງື່ອນໄຂທົ່ວໄປ

- **ຮູບແບບການແຂ່ງຂັນ:** ແມ່ນຈະໄດ້ປະກາດຢູ່ພາຍໃນກຸ່ມນັກຂ່າວພາກລັດເທົ່ານັ້ນ.
- **ຜູ້ມີສິດເຂົ້າປະກວດ:** ນັກຂ່າວພາກລັດ ທີ່ໄດ້ເຂົ້າຮ່ວມການເຄື່ອນໄຫວກິດຈະກຳ ຂອງໂຄງການ GAMCIL ໃນ ສົກປີ 2025–2026. ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ຜູ້ນຳໃຊ້ສື່ສັງຄົມອອນລາຍທົ່ວໄປ ທີ່ມີໜ້າສື່ອອນລາຍເປັນຂອງຕົນເອງບໍ່ສາມາດເຂົ້າຮ່ວມການປະກວດໄດ້.
- **ລິຂະສິດ:** ຜູ້ສົ່ງຂ່າວເຂົ້າປະກວດຕ້ອງເປັນເຈົ້າຂອງຜົນງານຕົ້ນສະບັບຢ່າງສົມບູນ ແລະ ແທ້ຈິງ. ຫ້າມລັກລອກຜົນງານຂອງຜູ້ອື່ນມາເປັນຂອງຕົນເອງ.
- ບົດຄວາມທີ່ສ້າງຂຶ້ນ ສາມາດນຳໃຊ້ ປັນຍາປະດິດ ຫຼື AI ເຂົ້າຊ່ວຍໃນການຄິດ, ການອອກແບບ ແລະ ການຜະລິດໄດ້ 100% ຫຼື ບາງສ່ວນ, ແຕ່ຕ້ອງໄດ້ຮັບການກວດສອບ ປັບປຸງ ແລະ ຢັ້ງຢືນ ຄວາມຖືກຕ້ອງ ຈາກຜູ້ຜະລິດ ແລະ ຈ້ອງໄດ້ລະບຸໃນສ່ວນຕ່າງໆທີ່ໃຊ້ AI ໃຫ້ລະອຽດ (ຍົກຕົວຢ່າງ ໃຊ້ AI ທັງໝົດໃນການສ້າງພາບ ແລະ ວິດີໂອ ກໍ່ຕ້ອງລະບຸ ຫຼື ພຽງບາງສາກ ຫຼື ບາງຮູບພາບ ກໍ່ໃຫ້ລະບຸຊັດເຈນ).
- ຕ້ອງໄດ້ຮັບອະນຸຍາດການນຳໃຊ້ຮູບພາບ/ສຽງ/ຄລິບວິດີໂອ ຖ້າມີການນຳໃຊ້ຜົນງານ ຂອງບຸກຄົນທີສາມ.
- **ຈັນຍາບັນ:** ເນື້ອໃນຕ້ອງບໍ່ຂັດກັບບະບຽບກົດໝາຍ ແລະ ວັດທະນະທຳຂອງຊາດລາວ, ບໍ່ມີເນື້ອໃນທີ່ອາດສ້າງຄວາມແຕກແຍກ, ການໝິ່ນປະໝາດ, ຫຼື ການກະທົບຕໍ່ຄວາມສະຫງົບສຸກຂອງສັງຄົມ.

### 2. ເງື່ອນໄຂ ຂອງການຜະລິດບົດຂ່າວທີ່ເປັນ ໂປສເຕີ້

- ໃຫ້ນຳໃຊ້ຂໍ້ມູນຈາກການໄປທັດສະນະສຶກສາ ຫຼື ຂໍ້ມູນ ຈາກແຫຼ່ງຂ່າວ ທີ່ໜ້າເຊື່ອຖືໄດ້ ເຂົ້າໃນການຜະລິດບົດຂ່າວ (ລະບຸແຫຼ່ງທີ່ມາຂອງຂໍ້ມູນຂ່າວໃນແບບຟອມ ຫຼື ຄຳອະທິບາຍ)
- ຕ້ອງມີ ຕົວເລກ ສະຖິຕິ ຫຼື ການສຳພາດ ບຸກຄົນ ໃນຫຼາຍມຸມມອງ ເຂົ້າໃນບົດຂ່າວຂອງຕົນ.
- ໂປສເຕີ້ ຕ້ອງເປັນຂະໜາດແນວຕັ້ງ (Portrait) ຂະໜາດ 1,080 x 1,350 px ທີ່ສາມາດພິມ ຫຼື ເຜີຍແຜ່ທາງສື່ສັງຄົມອອນລາຍໄດ້.
- ຄວາມລະອຽດຢ່າງໜ້ອຍ 300 dpi (dots per inch), ຕ້ອງສົ່ງເປັນໄຟລ໌ .JPG, .PNG, ຫຼື .PDF ຄຸນນະພາບສູງຢ່າງໜ້ອຍ 3MB ຂຶ້ນໄປ.

- ຕ້ອງປະກອບມີ ຫົວຂໍ້ຂ່າວ ທີ່ຊັດເຈນ, ກະທັດຮັດ ແລະ ມີ ໂລໂກ້ ຂອງໂຄງການ. ຂ່າວຕ້ອງເປີດເຜີຍແຫຼ່ງທີ່ມາຂອງຂໍ້ມູນ
- ການຈັດວາງອົງປະກອບ (Layout), ການໃຊ້ສີ, ຕົວໜັງສືຕ້ອງດຶງດູດສາຍຕາ ແລະ ອ່ານງ່າຍ
- ໂປສເຕີ້ ຕ້ອງມີຄວາມຍາວບໍ່ເກີນ 3 ໜ້າເຈ້ຍ ຫຼື 1,500 ຄຳສັບ, ຮູບພາບປະກອບບໍ່ເກີນ 3 ໃບ ຫຼື ສັ້ນສຸດບໍ່ໃຫ້ຫຼຸດ 500 ຄຳສັບ ແລະ ຮູບພາບປະກອບ 1 ໃບ
- ຜົນງານທີ່ສົ່ງເຂົ້າປະກວດທຸກໆບົດ ຕ້ອງເປັນຜົນງານທີ່ບໍ່ທັນໄດ້ຖືກນຳໃຊ້, ບໍ່ເຄີຍໂຜສລົງ ແລະ ບໍ່ເຄີຍໄດ້ຮັບລາງວັນໃດໆ ມາກ່ອນ
- ທຸກໆຜົນງານ ທີ່ສົ່ງເຂົ້າປະກວດ ຕ້ອງຮັບປະກັນບໍ່ໃຫ້ມີ ລາຍນ້ຳ (watermark) ຕິດໃສ່ມານຳ
- ຜູ້ເຂົ້າຮ່ວມ 1 ຄົນ ສາມາດສົ່ງບົດຂ່າວເຂົ້າປະກວດໄດ້ທັງ 2 ປະເພດ ແລະ ແຕ່ລະປະເພດສາມາດສົ່ງບົດປະກວດບໍ່ຈຳກັດຈຳນວນ

## 3. ເງື່ອນໄຂ ຂອງການຜະລິດບົດຂ່າວທີ່ເປັນ ວິດີໂອ

- ໃຫ້ນຳໃຊ້ຂໍ້ມູນຈາກການໄປທັດສະນະສຶກສາ ຫຼື ຂໍ້ມູນ ຈາກແຫຼ່ງຂ່າວ ທີ່ໜ້າເຊື່ອຖືໄດ້ ເຂົ້າໃນການຜະລິດວິດີໂອ (ລະບຸແຫຼ່ງທີ່ມາຂອງຂໍ້ມູນຂ່າວໃນແບບຟອມ ຫຼື ຄຳອະທິບາຍ)
- ຕ້ອງມີ ຕົວເລກ ສະຖິຕິ ຫຼື ການສຳພາດ ບຸກຄົນ ໃນຫຼາຍມຸມມອງ ເຂົ້າໃນບົດຂ່າວ ວິດີໂອ ຂອງຕົນ.
- ຄລິບວິດີໂອຂ່າວ ຕ້ອງມີຊື່ **ຫົວຂໍ້ຂ່າວ** ທີ່ຊັດເຈນ, ກະທັດຮັດ ແລະ ມີ **ໂລໂກ້** ຂອງໂຄງການ.
- ຄລິບວິດີໂອຂ່າວ ຄວາມຍາວບໍ່ໃຫ້ເກີນ 3 ນາທີ, ຕ້ອງເປັນຄລິບສັ້ນທີ່ກະທັດຮັດ ແລະ ສາມາດເຜີຍແຜ່ໃນສື່ສັງຄົມໄດ້.
- ຄວາມລະອຽດຢ່າງໜ້ອຍ **HD 1080p** (1920x1080) ແລະ ຕ້ອງສົ່ງເປັນໄຟລ໌ **.MP4**
- ຕ້ອງມີການບັນຍາຍ **Subtitles** ຫຼື ການສຳພາດທີ່ **ຊັດເຈນ**, ຖ້າເປັນ ພາສາລາວຕ້ອງໃສ່ Subtitles ເປັນພາສາອັງກິດ ແລະ ພາສາອັງກິດ ຕ້ອງໃສ່ Subtitles ເປັນພາສາລາວ
- ຫ້າມຕັດຕໍ່ ຫຼື ນຳໃຊ້ຂໍ້ມູນທີ່ບິດເບືອນຄວາມເປັນຈິງ (ຂໍ້ມູນປອມ)
- ຄວນໃຊ້ສຽງດົນຕີປະກອບທີ່ຖືກຕ້ອງຕາມກົດໝາຍລິຂະສິດ.
- ຜົນງານທີ່ສົ່ງເຂົ້າປະກວດ ຕ້ອງເປັນຜົນງານທີ່ບໍ່ທັນໄດ້ຖືກນຳໃຊ້ ຫຼື ໂພສລົງ ທາງອອນລາຍ ແລະ ຕ້ອງບໍ່ເຄີຍໄດ້ຮັບລາງວັນໃດໆ ມາກ່ອນ
- ທຸກໆຜົນງານ ທີ່ສົ່ງເຂົ້າປະກວດ ຕ້ອງຮັບປະກັນບໍ່ໃຫ້ມີ ລາຍນ້ຳ (watermark) ຕິດເຂົ້າມານຳ
- ຜູ້ເຂົ້າຮ່ວມ 1 ຄົນ ສາມາດສົ່ງບົດຂ່າວເຂົ້າປະກວດໄດ້ທັງສອງປະເພດ ແລະ ແຕ່ລະປະເພດສາມາດສົ່ງເຂົ້າປະກວດບໍ່ຈຳກັດຈຳນວນ

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

Lao Journalists Association

## ຮູບແບບ: ບົດຂ່າວທີ່ເປັນໂປສເຕີ້

| ເກນການປະເມີນລາຍລະອຽດຄະແນນເຕັມ | ລາຍລະອຽດ | ຄະແນນເຕັມ |
|---|---|---|
| ຄວາມເປັນຂ່າວ ແລະ ຄວາມສຳຄັນ | ເນື້ອໃນທັນສະໄໝ (ກ່ຽວຂ້ອງກັບຍຸກປະຈຸບັນ), ມີຄວາມສຳຄັນ ແລະ ກ່ຽວຂ້ອງກັບຜູ້ອ່ານ. | 20 ຄະແນນ |
| ຄວາມຖືກຕ້ອງ ແລະ ຄວາມໜ້າເຊື່ອຖື | ຂໍ້ມູນຖືກຕ້ອງ, ຢັ້ງຢືນແຫຼ່ງທີ່ມາທີ່ໜ້າເຊື່ອຖື ແລະ ມີຄວາມສົມດູນ (ບໍ່ມີການບິດເບືອນ) ແລະ ບໍ່ອຳອຽງ. | 20 ຄະແນນ |
| ຄວາມຊັດເຈນ ແລະ ໂຄງສ້າງ | ມີຫົວຂໍ້, ມີຄຳນຳ (Lead) ທີ່ໜ້າສົນໃຈ, ໂຄງສ້າງທີ່ຈັດລຽງຕາມປັດໄຈ ແລະ ເຫດຜົນ, ໃຊ້ພາສາທີ່ຊັດເຈນ, ຖືກຕ້ອງຕາມຫຼັກໄວຍາກອນ , ສະກົດຄຳຖືກ. | 15 ຄະແນນ |
| ການໃຊ້ແຫຼ່ງຂໍ້ມູນ/ການສຳພາດ | ມີການເນັ້ນຄຳເວົ້າທີ່ສຳຄັນໃນວົງຢືມ (Quotes) ຈາກແຫຼ່ງຂ່າວທີ່ກ່ຽວຂ້ອງ, ມີຄວາມຫຼາກຫຼາຍ ແລະ ເພີ່ມມິຕິໃຫ້ແກ່ເນື້ອໃນ. | 15 ຄະແນນ |
| ຄວາມນິຍົມ | ຄວາມສາມາດໃນການກະຕຸ້ນໃຫ້ຜູ້ຊົມຢາກ **ກົດໄລ້, ຄອມເມັນ, ແຊຣ໌** ຕໍ່ຄວາມຄິດ ຫຼື ບົດເລື່ອງ | 10 ຄະແນນ |
| ຄວາມຄິດສ້າງສັນ | ສ້າງສິ່ງໃໝ່ໆ ແລະ ຊອກຫາວິທີການແກ້ໄຂບັນຫາແບບເປັນເອກະລັກ | 10 ຄະແນນ |
| ຄຸນນະພາບໃນການຂຽນສະຄລິບ | ຂຽນໂຄງສ້າງທີ່ມີການຈັດລຽງເລື່ອງທີ່ດີ, ມີຈຸດເລີ່ມຕົ້ນ-ກາງ-ຈົບທີ່ຊັດເຈນ. ມີເນື້ອໃນດຶງດູດຜູ້ຊົມ, ສ້າງຄວາມປະທັບໃຈ, ສາມາດຖ່າຍທອດອາລົມໄດ້ຢ່າງຊາບຊຶ້ງ ແລະ ສາມາດດຶງດູດໃຫ້ຜູ້ຊົມເບິ່ງຈົນຈົບວິດີໂອ. | 10 ຄະແນນ |
| | **ຄະແນນລວມ** | **100 ຄະແນນ** |

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

Lao Journalists Association

## ຮູບແບບ: ບົດຂ່າວທີ່ເປັນວິດີໂອ

| ເກນການປະເມີນລາຍລະອຽດຄະແນນເຕັມ | ລາຍລະອຽດ | ຄະແນນເຕັມ |
|---|---|---|
| ເນື້ອໃນຂ່າວ ແລະ ການຄົ້ນຄວ້າ | ຫົວຂໍ້ມີຄວາມສຳຄັນ ແລະ ທັນສະໄໝ. ການນຳສະເໜີຂໍ້ມູນມີຄວາມຖືກຕ້ອງ, ເລິກເຊິ່ງ ແລະ ມີຄວາມສົມດູນ. | 15ຄະແນນ |
| ຄຸນນະພາບການຜະລິດ | ຄຸນນະພາບຂອງພາບ (ຄວາມຄົມຊັດ, ແສງ), ຄຸນນະພາບຂອງສຽງ (ຊັດເຈນ , ບໍ່ມີສຽງລົບກວນ) ແລະ ການຕັດຕໍ່ (ການປ່ຽນສາກທີ່ລຽບງ່າຍ). | 20 ຄະແນນ |
| ການເລົ່າເລື່ອງ/ການນຳສະເໜີ | ການນຳສະເໜີທີ່ສ້າງສັນ ແລະ ດຶງດູດຄວາມສົນໃຈ. ການໃຊ້ພາບປະກອບ, ກຣາຟຟິກ, ຫຼື ຕົວໜັງສືຂຶ້ນຈໍທີ່ເໝາະສົມ ເພື່ອຊ່ວຍໃຫ້ເຂົ້າໃຈໄດ້ງ່າຍ. | 20 ຄະແນນ |
| ຄວາມນິຍົມ | ຄວາມສາມາດໃນການກະຕຸ້ນໃຫ້ຜູ້ຊົມຢາກ ກົດໄລ້, ຄອມເມັນ, ແຊຣ໌ ຕໍ່ຄວາມຄິດ ຫຼື ບົດເລື່ອງ | 5 ຄະແນນ |
| ຄວາມຊັດເຈນການຂຽນ ແລະ ໂຄງສ້າງ | ຂຽນໂຄງສ້າງເລື່ອງແບບງ່າຍບໍ່ສັບສົນ, ພາສາແບບເຂົ້າໃຈງ່າຍ, ຂໍ້ຄວາມກະທັດຮັດ, ຕົງປະເດັນ, ບໍ່ມີຄຳສັບຊັບຊ້ອນເກີນໄປ, ແຕ່ລະປະໂຫຍກມີຈຸດປະສົງຊັດເຈນ ແລະ ເໝາະສົມກັບກຸ່ມເປົ້າໝາຍ. | 20 **ຄະແນນ** |
| ຄຸນນະພາບໃນການຂຽນສະຄຼິບ | ຂຽນໂຄງສ້າງທີ່ມີການຈັດລຽງເລື່ອງທີ່ດີ, ມີຈຸດເລີ່ມຕົ້ນ-ກາງ-ຈົບທີ່ຊັດເຈນ. ມີເນື້ອໃນດຶງດູດຜູ້ຊົມ, ສ້າງຄວາມປະທັບໃຈ, ສາມາດຖ່າຍທອດອາລົມໄດ້ຢ່າງຊາບຊຶ້ງ ແລະ ສາມາດດຶງດູດໃຫ້ຜູ້ຊົມເບິ່ງຈົນຈົບວິດີໂອ. | 20 ຄະແນນ |
| | **ຄະແນນລວມ** | 100 **ຄະແນນ** |

ໃຫ້ທຶນໂດຍ
ສະຫະພາບ ເອີຣົບ

Lao Journalists Association

## 1. ການສົ່ງບົດປະກວດແຂ່ງຂັນຜະລິດຕະພັນສື່ສີຂຽວ:

- ຜູ້ເຂົ້າແຂ່ງຂັນ ສົ່ງບົດປະກວດໂດຍ ການໂພສຜ່ານຊ່ອງທາງອອນລາຍຂອງຕົນເອງ (Facebook, YouTube, Webiste) ແລ້ວໃຫ້ໃສ່ ເຮັສແທັກ #GAMCIL #CAREinLaos #EUinlaos #LJA #greendevelopmentissues #GreenIssuesCompetition #Statejournalist
- ແທັກຫາເພຈ ສະມາຄົມນັກຂ່າວລາວ (https://www.facebook.com/profile.php?id=61569623111055 ແລະ ອົງການແຄຣ໌ ລາວ (https://www.facebook.com/careinlaos)
- ພາຍຫຼັງທີ່ໂພສລົງ ທາງອອນລາຍແລ້ວ ໃຫ້ລົງທະບຽນຂໍ້ມູນຂອງຕົນເອງຜ່ານລິ້ງນີ້: https://forms.gle/yFyygL1fPyY9cQfDA

## 2. ຫົວຂໍ້ການແຂ່ງຂັນ.

ໂດຍເນັ້ນໃສ່ 3 ຂະແໜງການ ເສດຖະກິດສີຂຽວ, ສັງຄົມ ແລະ ສິ່ງແວດລ້ອມ, ດັ່ງຫົວຂໍ້ລຸ່ມນີ້:

1. ການປົກປັກຮັກສາສິ່ງແວດລ້ອມ ໂດຍການມີສ່ວນຮ່ວມຂອງບົດບາດຍິງ-ຊາຍ (**Environment protection with a Specific focus on Gender).**
2. ການປັບຕົວຕໍ່ການປ່ຽນແປງຂອງດິນຟ້າອາກາດ ໂດຍການມີສ່ວນຮ່ວມຂອງບົດບາດຍິງ-ຊາຍ **(Climate Change Adaption with a Specific focus on Gender)"**

## 3. ວັນທີປິດຮັບຜົນງານການແຂ່ງຂັນ ຂອງທັງ 3 ກຸ່ມເປົ້າໝາຍ:

- ວັນທີ 11 ພະຈິກ 2025, ເວລາ 23:59 ໂມງ

## 4. ວັນທີປະກາດຜົນການແຂ່ງຂັນ ຂອງທັງ 3 ກຸ່ມເປົ້າໝາຍ:

- ວັນທີ 18 ພະຈິກ 2025, ທີ່ໂຮງແຮມ Holiday Inn & Suites, Vientiane